ຄວາມຮູ້ພູມປັນຍາທ້ອງຖິ່ນ

# "ການປູກໝາກໂມ"

(ສະບັບທົດລອງ)



ຂຽນໂດຍ: ທ່ານ ນະລົງ ອຸດົມສັກ

ຂໍ້ມູນຈາກ: ບ້ານນາຍາງ,ເມືອງ ນາຊາຍທອງນະຄອນຫຼວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# "ການປູກໝາກໂມ"


ແຕ້ມໂດຍ: ທ້າວ ໂຕ້

ຮີບໂຮມ ແລະ ຈັດໜ້າໂດຍ: ນາງ ແສງແກ້ວ ໄພທຸມພອນ

ຜູ້ຮຽບຮຽງ : ອ.ຈ ໂພໄຊ ຈັນທະວົງສາ
ອ.ຈ ເກດມະນີ ບັນດາສັກ
ອ.ຈ ຄຳໄຫວ
ອ.ຈ ລົ່ງ ແສງດາດາ
ອ.ຈ ທອງຂັນ



ເຈົ້າຂອງ : ພະແນກສຶກສານະຄອນຫຼວງວຽງຈັນ ແລະ ສູນອົບຮົມຮ່ວມພັດທະນາ



PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ ໄດ້ມາຈາກການຂຽນຂອງຊາວບ້ານແລະ ອາສາສະໝັກຊຶ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຄອນຫຼວງວຽງຈັນ.

ປື້ມຫົວນ້ອຍຫົວນີ້ ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະ ສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫັວງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ

ປະເທດລາວເປັນປະເທດທີ່ມີຊັບໃນດິນ,ສິນໃນນ້ຳຫຼາຍຊະນິດ ມີພືດພັນນານາຊະນິດທີ່ຫຼາກຫຼາຍ ແລະປະຊາຊົນລາວມີຄວາມດຸໝັ່ນ ຂະຫຍັນພຽນໂດຍສະເພາະການທຳຫາກິນການປູກຝັງເຊັ່ນ: ການປູກ ໂມກໍເປັນອາຊີບໜຶ່ງທີ່ປະຊາຊົນລາວ ນິຍົມປູກເພາະວ່າໝາກໂມເປັນ ພືດທີ່ປູກໄດ້ຜົນຜະລິດຫຼາຍ ແລະເປັນທີ່ຕ້ອງການຂອງທ້ອງຕະຫຼາດ ,ໝາກໂມມີລົດຊາດຫວານຫອມ ແລະໃຫ້ທາດນ້ຳຫຼາຍ,ດັ່ງນັ້ນປະຊາ ຊົນບ້ານນາຍາງກໍເປັນບ້ານໜຶ່ງທີ່ນິຍົມກັນປູກໝາກໂມເພື່ອລ້ຽງຊີບ.

PDF created with pdfFactory Pro trial version www.pdffactory.com

<u>**ອຸປະກອນ**</u>

ຈິກ



ຊ້ວານ



ຖ້ວຍແກງ



PDF created with pdfFactory Pro trial version www.pdffactory.com

ແກ່ນໝາກໂມ



ມີດ



PDF created with pdfFactory Pro trial version www.pdffactory.com

## ຂັ້ນຕອນ:

### I.ການກຽມດິນ

ໄຖ - ຄາດ ດິນຕາກແດດເພື່ອຂ້າເຊື້ອ ຫຼື ຂຸດຂຸມກໍໄດ້ຖ້າບໍ່ໄດ້ປູກໃນເນື້ອທີ່ກວ້າງຫຼາຍ



PDF created with pdfFactory Pro trial version www.pdffactory.com

## ວິທີປູກ

### 1.ການຂຸດຂຸມ

ປູກແບບຂຸດຂຸມເປັນແຖວ, ໄລຍະຫ່າງຂອງແຖວ 1,20 X 150 ຊມ ລວງກ້ວາງ 40 X ລວງຍາວ 40 X ເລິກ 40 ຊມ



ປູກແບບຍົກຮ່ອງເປັນໜານກວ້າງ 50 ຊັງຕີແມັດ X 400 ຊັງຕີແມັດ ຄວາມຍາວຕາມຄວາມເໝາະສົມ.

PDF created with pdfFactory Pro trial version www.pdffactory.com

2. ການໃສ່ຝຸ່ນຮອງກົ້ນຂຸມ

- ໃສ່ຝຸ່ນຄອກ 1 ຖ້ວຍ ແກງ, ຄົນໃຫ້ເຂົ້າກັນຄວັດໃຫ້ສູງຂຶ້ນ
- ໃສ່ປຸຍສູດ 15.15.15 ໃສ່ 1 ບ່ວງແກງ



- ການເອົາໃສ່ຂຸ່ມແມ່ນໃຫ້ນັບ 2 – 3 ແກ່ນ ຕໍ່ ຂຸມ,ແລ້ວປູກ, ຫຼັງຈາກ 5 – 7 ວັນ ມັນຈະແຕກງອກ



PDF created with pdfFactory Pro trial version www.pdffactory.com

- ເບ້ຍໝາກໂມແຕກໃບຄາຍໄດ້3 - 4 ໃບ



- ແລ້ວໃຫ້ຫຼົກເບ້ຍທີບໍ່ແຂງແຮງອອກ,ຈົງ 1 – 2 ເບ້ຍທີ່ແຂງແຮງໄວ້
- ອາຍຸ 3 ອາທິດ ຫຼື 21 ວັນ ໃຫ້ຕຸ້ມຂຸມຫຼື ຄູນດິນຂຶ້ນ
- ອາຍຸ 45 ວັນ ໃຫ້ໃສ່ຝຸ່ນອີກ
- ອາຍຸ 55 ວັນ ໃຫ້ຕັດແໜງທີ່ບໍ່ມີໝາກອອກ
- ອາຍຸ 75 ວັນ ເລີ່ມເກັບໝາກໄປຮອດ ອາຍຸ 90 ວັນຖືວ່າໝັດ



PDF created with pdfFactory Pro trial version www.pdffactory.com

## ກາບ: ການປູກໝາກໂມ

ຂ້ອຍຊິເວົ້າ ການປູກໝາກໂມ
ບໍ່ແມ່ນໂຄ ຂ້ອຍຕັ້ງເຄີຍປູກ
ເປັນຮອດລູກ ຂອງຂ້ອຍທຸດຄືນ
ປູກມາດົນ ຈົນເຂົາລືຊື່

## ເຊີ້ງ: ໝາກໂມບ້ານເຮົາ

ມາພວກເຮົາມາ ມາປູກໝາກໂມ
ພາກັນມາໂຊ ມາໂມໃຜໃຫຍ່
ແລ້ວເຮົາເອົາໄປ ຂາຍຢູ່ຕະຫຼາດ
ບໍ່ຢາກໃຫ້ຂາດ ໝາກໂມໜ່ວຍງາມ

## ເພງ: ໝາກໂມແດງງາມ

ຂໍເຊີນພີ່ນ້ອງ ທີ່ເຄີຍຮັກແພງ
ໄປເບິ່ງໄປແຍງ ສວນແຕ່ງທີ່ຫວ້ຍບົວຄຳ
ຂໍໃຫ້ພີ່ນ້ອງ ພໍ່າພ້ອມພາກັນໄປຍາມ
ໝາກໂມແດງງາມ ຂໍເຊີນໄປເບິ່ງນຳກັນ

PDF created with pdfFactory Pro trial version www.pdffactory.com

# ລຳ: ໝາກໂມບ້ານເຮົາ

ຢູ່ບ້ານເຮົາ ໝາກໂມມັນແຊບອີ່ລີ້
ລອງຊີມເບິ່ງຕີ່ ມັນທັງຫອມທັງຫວານ
ມັນເປັນອາຫານ ຊ່ວຍໃຫ້ຄາຍຮ້ອນ
ພວກເຈົ້າມາທ້ອນ ມາຊີມໝາກໂມບ້ານເຮົາ

PDF created with pdfFactory Pro trial version www.pdffactory.com

# ຮູບ ແລະ ປະຫວັດຂອງຜູ້ຂຽນ



ຊື່ ທ້າວ ນະລິງ

ນາມສະກຸນ ອຸດົມສັກ

ອາຍຸ 60 ປີ

ອາຊີບ ປະຊາຊົນ

## ເຫດຜົນຂອງຜູ້ຂຽນບົດ:

ເພາະຂ້າພະເຈົ້າ ຕ້ອງການໃຫ້ຄົນຮຸ່ນໃໝ່ສົ່ງເສີມເພີ່ມພູນຜະລິດຜົນດ້ານກະສິກຳ,ຮັກໃນການອອກແຮງງານ ແລະ ສິ່ງທີ່ສຳຄັນຍັງເປັນການລຸດຜ່ອນການນຳເຂົ້າສິນຄ້າຈາກເພື່ອນບ້ານດັ່ງຄຳຂວັນທີ່ວ່າ " ລາວເຮັດລາວໃຊ້ ລາວໄດ້ລາວຈະເລີນ "

PDF created with pdfFactory Pro trial version www.pdffactory.com